# ການຊຳລະເງິນຄ່າລະບົບ

<u>**ການຊຳລະເງິນຄ່າລະບົບ**</u>

1. ກົດໃສ່ເມນູ **ຮູບບັດເຄດິດ** ຈາກນັ້ນກົດ **CUSTOM** ເລືອກຕາມຄວາມຕ້ອງການ

- **CUSTOM:** ເໝາະສຳລັບທຸລະກິດທີ່ຕ້ອງການນຳໃຊ້ຟັງຊັນບາງສ່ວນຂອງ ບັນຊີ.la ຫຼື ຕິດຕໍ່ທີມງານເພື່ອພັດທະນາໃຫ້ສະເພາະຂອງອົງກອນທ່ານ




2. ຫຼັງຈາກນັ້ນເລືອກ **ໄລຍະການນຳໃຊ້**, **ຜູ້ໃຊ້** ແລະ **ເລືອກຟັງຊັນ** ຕາມຄວາມຕ້ອງການ ເປີດໃຊ້ງານ ເມນູການໃຊ້ງານໃຫ້ເລືອກໃຊ້ ( ແຕ່ລະເມນູຈະມີ ຄ່າບໍລິການທີ່ບໍ່ເທົ່າກັນ ) ສາມາດກວດສອບການລາຍການກ່ອນໃນຫ້ອງ ການສະໝັກນຳໃຊ້




- **ໄລຍະເວລາການນຳໃຊ້ :** ເລືອກໄລຍະເວລາທີ່ຕ້ອງການນຳໃຊ້ ( ເດືອນ )
- **ຜູ້ໃຊ້ :** ການເພີ່ມຜູ້ໃຊ້ງານເບື້ອງຕົ້ນລະບົບຈະໃຫ້ສິດ 3 ຜູ້ໃຊ້ງານ, ຖ້າຕ້ອງການເພີ່ມຜູ້ໃຊ້ ໃຫ້ກົດຕາມຄວາມຕ້ອງການ
- **ການຕິດຕາມ ລາຍຮັບ-ລາຍຈ່າຍ :**

  - ລາຍຮັບ, ໃບເກັບເງິນ, ລູກຄ້າ ແລະ ລາຍງານສະຫຼຸບລາຍຮັບ

  - ລາຍຈ່າຍ, ໃບສັ່ງຈ່າຍ, ຜູ້ສະໜອງ ແລະ ລາຍງານສະຫຼຸບລາຍຈ່າຍ

  - ຊັບສິນບັນຊີໝູນວຽນ (ເງິນ), ການໂອນເງິນ, ສະຫຼຸບທຸລະກຳການເງິນ ແລະ ສະຫຼຸບບັນຊີໝູນວຽນ (ເງິນ)

- **ການຕິດຕາມ ເງິນເດືອນ :**

  - ພະນັກງານ, ພະແນກ, ຜົນປະໂຫຍດ ແລະ ເງິນເດືອນ

  - ລາຍງານເຊື່ອມຕໍ່ກັບ TaxRIS, ລາຍງານມອບຈ່າຍ ປະກັນສັງຄົມ ແລະ ລາຍງານສະຫຼຸບເງິນເດືອນ

- **ການຕິດຕາມ ສາງ :**

  - ສາງ, ສິນຄ້າ, ຫົວໜ່ວຍ, ການເກັບກັບສິນຄ້າ, ການເຄື່ອນຍ້າຍສິນຄ້າ ແລະ ການຜະລິດ

- ລາຍງານສະຫຼູບສິນຄ້າ, ສະຫຼູບສິນຄ້າໝົດອາຍຸ ແລະ ສະຫຼູບການເຄື່ອນຍ້າຍ

- **ການບັນຊີຄູ່ :**

- ເລກລະຫັດບັນຊີ, ຍອດຍົກມາ, ບັນຊີປະຈຳວັນ, ການປັບປຸງ, ແລະ ການປິດບັນຊີ

- ປື້ມບັນຊີປະຈຳວັນ, ບັນຊີໃຫ່ຍແຍກປະເພດ ແລະ ປື້ມຕິດຕາມເງິນສົດ

- ຕາຕະລາງຕິດຕາມສິນຄ້າຄ້າງສາງ, ຕາຕະລາງຕິດຕາມການຜະລິດ ແລະ ຕາຕະລາງຫັກຄ່າຫຼຸ້ຍຫ້ຽນຊັບສົມບັດຄົງທີ່

- ໃບດຸ່ນດ່ຽງ, ໃບດຸນດ່ຽງພາຍຫຼັງການສ້າງໃບລາຍງານຜົນການດຳເນີນງານ, ໃບສັ່ງລວມລາຍຮັບ-ລາຍຈ່າຍ, ໃບລາຍງານຜົນການດຳເນີນງານ, ໃບລາຍງານຖານະການເງິນ, ໃບລາຍງານກະແສເງິນສົດ ແລະ ໃບລາຍງານສ່ວນປ່ຽນແປງທຶນ

- **ການບັນຊີຮູບແບບເງິນສົດ :**

- ປື້ມບັນຊີປະຈຳວັນ, ປື້ມຕິດຕາມບັນຊີ ແລະ ໃບລາຍງານການຮັບ-ຈ່າຍເງິນສົດ

- ປື້ມຕິດຕາມຊັບສົມບັດຄົງທີ່, ປື້ມຕິດຕາມເຄື່ອງໃນສາງ, ປື້ມຕິດຕາມໜີ້ຕ້ອງຮັບ ແລະ ປື້ມຕິດຕາມໜີ້ຕ້ອງສົ່ງ

- **ໃບເກັບເງິນ ອາກອນມູນຄ່າເພີ່ມ ( ສຳລັບລູກຄ້າທີ່ຕ້ອງການນຳໃຊ້ ໃບບິນອມພ ຕ້ອງໄປແລ່ນໃບອານຸຍາດ ) :**

- ສຳລັບການນຳໃຊ້ລະບົບ ອມພ

- ໃບເກັບເງິນ ອມພ, ລູກຄ້າ, ສາງ (ແບບພື້ນຖານ) ແລະ ລາຍງານສະຫຼຸບລາຍຮັບ

- ຕາຕະລາງ ສະຫຼຸບໃບເກັບເງິນ ອມພ (ສົ້ມເຂົ້າ/ສົ້ມອອກ)

3. ຈາກນັ້ນກົດ **ຊຳລະຄ່າບໍລິການຜ່ານ BCEL OnePay**




4. ຂັ້ນຕອນຕໍ່ໄປແມ່ນການ ຈ່າຍໂອນຈ່າຍຄ່າລະບົບ

## ການສະມັກການນຳໃຊ້

| ລາຍການ | ຈຳນວນ | ລາຄາ |
|---|---|---|
| ໄລຍະການນຳໃຊ້ | 1 ເດືອນ | |
| ຜູ້ໃຊ້ | 3 ຜູ້ໃຊ້ | 0,00 ກີບ |
| ການຕິດຕາມ ລາຍຮັບ-ລາຍຈ່າຍ | ເປີດໃຊ້ງານ | 80.000,00 ກີບ |
| ການຕິດຕາມ ເງິນເດືອນ | ປິດໃຊ້ງານ | 0,00 ກີບ |
| ການຕິດຕາມ ສາງ | ປິດໃຊ້ງານ | 0,00 ກີບ |
| ການບັນຊີຄູ່ | ເປີດໃຊ້ງານ | 80.000,00 ກີບ |
| ການບັນຊີຮູບແບບເງິນສົດ | ປິດໃຊ້ງານ | 0,00 ກີບ |
| ໃບເກັບເງິນ ອາກອນມູນຄ່າເພີ່ມ | ເປີດໃຊ້ງານ | 80.000,00 ກີບ |
| | ລວມ | 240.000,00 ກີບ |
| | ອມພ | 16.800,00 ກີບ |
| | **ທັງໝົດ** | **256.800,00 ກີບ** |

## ວິທີການຊຳລະເງິນ

BCEL One

ຊຳລະຄ່າບໍລິການຜ່ານ BCEL OnePay

✔ ກວດການຊຳລະເງິນ

MARUHAN JAPAN BANK LAO

ຊຳລະຄ່າບໍລິການຜ່ານ MARUHAN JAPAN BA

✔ ກວດການຊຳລະເງິນ